# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດທີ 28 ພຶສພາ 2017 (5-28-2017)

---

## ຊີວິດໃນການປະກາດ

*ແມ່ນຫຍັງທີ່ທ່ານມັກທີ່ສຸດກ່ຽວກັບການຕິດຕໍ່ກັບຄົນ ?*

**ຈຸດສຳຄັນໃນບົດຮຽນ**: ພວກເຮົາສາມາດແບ່ງປັນຂ່າວປະເສີດໄດ້ຜົນດີກວ່າ ເມື່ອເຮົາໃສ່ເກີບຄົນອື່ນ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ເຂົາເອີ້ນກັນວ່າຫໍພິພິທພັນຫົວອົກດຽວກັນ (Empathy Museum), ແຕ່ເປັນຫໍພິພິທພັນ ຊະນິດແຕກຕ່າງກັນກັບທີ່ທ່ານຄຸ້ນເຄີຍມາ. ເມື່ອທ່ານກ້າວເຂົ້າໄປທາງໃນ, ບາງຄົນອາດເໝາະກັບທ່ານດ້ວຍເກີບຄູ່ນຶ່ງ. ເປັນເກີບທີ່ແຕກຕ່າງຈາກເກີບຂອງທ່ານ. ອາດເປັນເກີບດັ້ງເດີມທີ່ອາຈານເກມໝາກຣຸກເຄີຍສວມໃສ່, ຫຼືເປັນເກີບຄົນນຶ່ງຂອງທີມກິລາຮອກກີ້, ຫຼື ແມ້ກະທັ້ງເປັນເກີບຂອງຄົນງານລະບາຍນໍ້າສົກກະປົກຜູ້ນຶ່ງກໍເປັນໄດ້.

ຫໍພິພິທພັນຫົວອົກດຽວກັນຖືກອອກແບບຂຶ້ນມາ ເພື່ອໃຫ້ມີປະສົບການກັບຄຳກ່າວຂານທີ່ວ່າ: " ທ່ານບໍ່ອາດເຂົ້າໃຈຄົນອື່ນ ຈົນກວ່າທ່ານສວມໃສ່ເກີບລາວແລ້ວຍ່າງໄປໄລຍະນຶ່ງໄມ." ເໝືອນກັນກັບແລ່ນວຽກຫໍສມຸດຢ່າງນຶ່ງ, ແຕ່ວ່າທ່ານບໍ່ໄດ້ຢືມປຶ້ມ; ທ່ານ "ຢືມ" ຄົນອື່ນແລະທ່ານໂອ້ລົມກັບລາວ. ທ່ານຮຽນຮູ້ກ່ຽວກັບຄົນຜູ້ນັ້ນ, ລວມທັງປະສົບການໃນຊີວິດຂອງລາວ. ປະສົບການທັງໝົດໄດ້ຖືກອອກແບບຂຶ້ນມາ ເພື່ອຊ່ວຍທ່ານໃຫ້ມອງເຫັນໂລກຜ່ານສາຍຕາຂອງຄົນອື່ນ.

ມີຫຍັງ ຖ້າເຮົາກ້າວໄປອີກກ້າວນຶ່ງ? ມີຫຍັງຖ້າ ເຮົາພຽງແຕ່ມີການເຂົ້າໃຈຄົນອື່ນ, ເປັນຫຍັງພວກເຮົາບໍ່ໃຊ້ຄວາມເຂົ້າໃຈນັ້ນເພື່ອສ້າງເປັນຂົວໄຕ່? ແລະບໍ່ແມ່ນພຽງແຕ່ຂົວໄຕ່ໄປບ່ອນອື່ນ, ແຕ່ແມ່ນຂົວໄຕ່ໄປຫາພຣະເຢຊູຄຣິດ?

**ພຣະຄັມພີກ່າວວ່າແນວໃດ?** ( ເບິ່ງຕາມຫົວຂໍ້ 1, ແລະ 2 )

### ການສຶກສາພຣະຄັມພີ

**1. <u>1ໂກຣິນໂທ 9:19-23</u>** :

*[19] ເຖິງແມ່ນວ່າເຮົາບໍ່ໄດ້ຢູ່ໃນບັງຄັບຂອງຜູ້ໃດ ເຮົາກໍຍັງຍອມຕົວເປັນຜູ້ຮັບໃຊ້ຂອງຄົນທັງປວງ ເພື່ອຈະໄດ້ນຳຄົນຫລວງ*
*ຫລາຍມາເປັນສິດ. [20]ຕໍ່ຄົນຢິວເຮົາໄດ້ເຮັດເໝືອນຄົນຢິວ ເພື່ອຈະໄດ້ໃຈຄົນຢິວ ຕໍ່ຄົນທີ່ຢູ່ໃຕ້ພຣະບັນຍັດ ເຮົາກໍເຮັດ*
*ເໝືອນຄົນທີ່ຢູ່ໃຕ້ພຣະບັນຍັດ (ເຖິງແມ່ນເຮົາເອງບໍ່ຢູ່ໃຕ້ພຣະບັນຍັດກໍດີ) ເພື່ອຈະໄດ້ໃຈຄົນທັງຫລາຍ ທີ່ຢູ່ໃຕ້ພຣະບັນ*
*ຍັດນັ້ນ. [21]ຕໍ່ຄົນທີ່ຢູ່ນອກພຣະບັນຍັດເຮົາກໍເຮັດເໝືອນຄົນທີ່ຢູ່ນອກພຣະບັນຍັດ (ເຖິງແມ່ນເຮົາບໍ່ຢູ່ນອກພຣະບັນຍັດ*
*ຂອງພຣະເຈົ້າກໍດີ ແຕ່ເຮົາຢູ່ໃຕ້ພຣະບັນຍັດຂອງພຣະຄຣິດ) ເພື່ອຈະໄດ້ໃຈຄົນທັງຫລາຍທີ່ຢູ່ນອກພຣະບັນຍັດນັ້ນ.[22]ຕໍ່*
*ຄົນທີ່ອ່ອນແອເຮົາກໍເຮັດເໝືອນຄົນອ່ອນແອ ເພື່ອຈະໄດ້ຄົນອ່ອນແອ ເຮົາຍອມເປັນຄົນທຸກຊະນິດ ເພາະເຫັນແກ່ຄົນ*
*ທັງປວງ ເພື່ອເຮົາຈະໄດ້ຊ່ອຍບາງຄົນໃຫ້ພົ້ນ ດ້ວຍທຸກວິທີທາງ. [23]ເຮົາເຮັດຕາມສິ່ງເຫຼົ່ານີ້ເພາະເຫັນແກ່ຂ່າວປະເສີດ*

*ເພື່ອເຮົາຈະໄດ້ມີສ່ວນໃນຂ່າວປະເສີດນັ້ນ.*

ພວກເຮົາເວົ້າຫຼາຍພາສາໃນໂລກປັດຈຸບັນ. ແລະບໍ່ສະເພາະພຽງແຕ່ພາສາອັງກິດ, ສະເປນ, ຊວາຮີລີ, ຫຼືຈີນ ເທົ່ານັ້ນ. ແມ່ນແຕ່ພາສາເວົ້າດຽວກັນກໍຍັງມີຫຼາຍ "ພາສາວັທະນະທັມ" ແຕກຕ່າງກັນ. ຕົວຢ່າງ, ຄົນອາຍຸ ຊາວປາຍ ເວົ້າກ່ຽວກັບຊີວິດແຕກຕ່າງກັບຄົນແກ່ອາວຸໂສຫຼາຍ. ແລະຄົນພາກຕາເວັນຕົກສ່ຽງເໜືອກໍບໍ່ຄ່ອຍຈະ "ເຂົ້າໃຈ" ຄົນພາກໃຕ້.

ໃນການເດີນທາງຄັ້ງນີ້, ທ່ານອັຄສາວົກໂປໂລກໍໄດ້ປະສົບກັບວັທນະທັມແຕກຕ່າງກັນ ຢ່າງດຽວກັນນີ້. ອານາຈັກໂຣມກວ້າງໃຫຍ່ໄພສານ, ຊຶ່ງໝາຍຄວາມວ່າມັນບັນຈຸຄົນທີ່ມີເບື້ອງຫຼັງ ແລະວັທນະທັມທີ່ແຕກຕ່າງກັນ ຕ່າງກໍມອງເຫັນຊີວິດແຕກຕ່າງກັນ ແລະຕ່າງກໍເຫັນຂ່າວປະເສີດໃນແງ່ມຸມແຕກຕ່າງກັນ. ເຖິງຈະມີການທ້າທາຍມາກມາຍກໍຕາມ ທ່ານໂປໂລກໍໄດ້ປະກາດຂ່າວປະເສີດແກ່ທຸກຄົນຕາມເປົ້າໝາຍ ໂດຍບໍ່ຄຳນຶງເຖິງເບື້ອງຫຼັງຂອງເຂົາ.

ທ່ານໂປໂລເຂົ້າໃຈວ່າທຸກຄົນສາມາດເຂົ້າໄດ້ໃນວິທີຕ່າງກັນດ້ວຍຄວາມຈິງຂອງຂ່າວປະເສີດ. ເພິ່ນມຸ້ງໝັ້ນໃສ່ແຜນງານນີ້, ເຫດສະນັ້ນເພິ່ນຈຶ່ງໄດ້ກ່າວວ່າ, "ເຮົາຍອມເປັນຄົນທຸກຊະນິດ ເພາະເຫັນແກ່ຄົນທັງປວງເພື່ອເຮົາຈະໄດ້ຊ່ອຍບາງຄົນໃຫ້ພົ້ນດ້ວຍທຸກວິທີທາງ." ທ່ານໂປໂລໄດ້ຍອມເປັນແມ່ນກະທັ້ງ "ຂ້າທາດ" ຕໍ່ໜ້າທີ່ນີ້; ເພິ່ນເປັນສັນຊາດໂຣມໂດຍເສຣີ ແລະເປັນເສຣີໃນພຣະຄຣິດ ແຕ່ເພິ່ນກໍເລືອກທີ່ຈະຮັບໃຊ້ຄົນຕ່າງກັນເຫຼົ່ານີ້ໃນວິທີໃດວິທີໜຶ່ງ ຊຶ່ງມີອິດທິພົນຕໍ່ເຂົາ ແລະນຳເຂົາມາຫາພຣະຄຣິດ. ໃນທາງນີ້, ທ່ານໂປໂລໄດ້ເຮັດຕາມແບບຢ່າງທີ່ພຣະເຢຊູໄດ້ວາງໄວ້ໃຫ້ເຮົາວ່າ: "ເພາະບຸດມະນຸດນັ້ນບໍ່ໄດ້ມາໃຫ້ຄົນອື່ນປະຕິບັດຕົນ ແຕ່ມາເພື່ອປະຕິບັດເຂົາ ແລະປະທານຊີວິດຂອງຕົນໃຫ້ເປັນຄ່າໄຖ່ຄົນຈຳນວນຫຼາຍ" (ມຣກ10:45).

### *ທ່ານໄດ້ຍິນຂ່າວປະເສີດຄັ້ງແລກຢ່າງໃດ ?*

ເປັນເຣື່ອງລ້ຳລືກັນຫຼາຍ, ເພາະພຣະເຢຊູເປັນແບບຢ່າງທີ່ດີເລີດໃນການຮັບໃຊ້ຄົນອື່ນ ແລະປ່າວປະກາດຂ່າວປະເສີດ.

ໃນບົດນີ້ເຮົາໄດ້ເຫັນທ່ານໂປໂລ ເຂົ້າເຖິງຄົນບ່ອນທີ່ເຂົາຢູ່ ບໍ່ແມ່ນບ່ອນທີ່ເພິ່ນຄາດຫວັງໃຫ້ເຂົາຢູ່. ໂດຍສະເພາະແລ້ວທ່ານໂປໂລໄດ້ຊີ້ໃຫ້ເຫັນເຖິງຄົນສາມກຸ່ມທີ່ມີວັທນະທັມຕ່າງກັນກັບວັທນະທັມຂອງເພິ່ນ ທີ່ຕ້ອງການຂ່າວປະເສີດ:

1. **ຄົນຢິວ.** ທ່ານໂປໂລເປັນຄົນຢິວ, ແນ່ນອນ, ແຕ່ດ້ວຍພຣະຄຸນຂອງພຣິດເພິ່ນຈຶ່ງບໍ່ໄດ້ປະຕິບັດຕາມປະເພນີ ແລະບໍ່ຢຶດຖືທັມນຽມຂອງພຣະບັນຍັດຢິວເມື່ອປະຕິບັດຕໍ່ຄົນຢິວ, ເຖິງປານນັ້ນທ່ານໂປໂລກໍໄດ້ກະທຳຕາມພິທີກັມຂອງເຂົາເພື່ອເປັນທາງນຳເຂົາມາເຊື່ອ ແລະໄດ້ຍິນຂ່າວປະເສີດ (ເບິ່ງ ກຈກ 16:1-3; 21:23-26).
2. **ຜູ້ທີ່ປາສຈາກພຣະບັນຍັດ.** ພວກນີ້ແມ່ນຄົນຕ່າງດ້າວ. ຕົວຢ່າງອັນດີເລີດທີ່ທ່ານໂປໂລປັບຕົວເຂົ້າກັບຄົນຕ່າງຊາດ ແມ່ນຄຳຊີ້ແຈງຂອງເພິ່ນຖ້າມກາງສະພາອາເຣໂອປາໂຄ ໃນກຸງອາແຖນ (ເບິ່ງ ກຈກ7:22-31) ເພິ່ນບໍ່ໄດ້ຂຸດຄຸ້ຍເຖິງກົດບັນຍັດ ຫຼືພຣະເມຊີອາ; ແທນທີ່ຈະເຮັດດັ່ງນັ້ນ, ເພິ່ນເລີ້ມຕົ້ນດ້ວຍການກ່າວເຖິງວັທນະທັມຂອງເຂົາ ແລະໂລກທີ່ເຂົາຮູ້.
3. **ຜູ້ອ່ອນແອ.** ທີ່ນີ້, ທ່ານໂປໂລໄດ້ກ່າວເຖິງຄົນອ່ອນແອຢ່າງດຽວກັນກັບພວກທີ່ໄດ້ກ່າວໃນບົດກ່ອນ (ເບິ່ງ 1ກຣທ 8:7-13). ເພາະວ່າພວກສິດທີ່ຕິດຕາມນີ້ມີຄວາມເຂົ້າໃຈພຽງເລັກນ້ອຍ ແລະຈິດສຳນຶກອ່ອນແອ, ການກະທຳຂອງຜູ້ເຊື່ອອື່ນໆອາດເປັນຫີນໃຫ້ເຂົາຂູນສະດຸດລົ້ມໄດ້. ທ່ານໂປໂລໄດ້ຊີ້ໃຫ້ເຫັນເຖິງສະພາບຂອງເຂົາ ເພື່ອຊັກນຳເຂົາມາຫາຂ່າວປະເສີດ.

ທ່ານໂປໂລປັບຕົວເຂົ້າກັບທຸກສະພາບການສເມີ ແລະເພິ່ນປະສົງຈະອອກໄປຈາກບ່ອນສະດວກສະບາຍ (comfort zones) ຂອງເພິ່ນເອງ ເພາະເຫັນແກ່ຂ່າວປະເສີດ.

ພວກເຮົາກໍ່ສົມຄວນກ້າວອອຈາກບ່ອນສະດວກສະບາຍຂອງເຮົາເໝືອນກັນ. ແຕ່ພວກເຮົາຄວນກະທຳໂດຍບໍ່ໃຫ້ເສັຽຖານະຂອງເຮົາໃນພຣະຄຣິດ. ໜ້າປລາດໃຈ, ໃນລະບົບດຳເນີນງານນັ້ນ, ພວກເຮົາສາມາດຊ່ອຍຄົນອື່ນໃຫ້ພົບຖານະຂອງເຂົາເອງໃນພຣະຄຣິດ ເຊັ່ນດຽວກັນ.

***ມີວິທີທາງອັນໃດແດ່ທີ່ຄຣິສຕຽນໃຊ້ໃນການປ່າວປະກາດຂ່າວປະເສີດ ?***

## 2. <u>1 ໂກຣິນໂທ 9:24-27</u> :

*24 ເຈົ້າທັງຫຼາຍບໍ່ຮູ້ຫຼືວ່າ ຄົນເຫຼົ່ານັ້ນທີ່ແລ່ນແຂ່ງກັນ ກໍແລ່ນດ້ວຍກັນທຸກຄົນ ແຕ່ຄົນທີ່ໄດ້ຮັບລາງວັນມີແຕ່ຄົນດຽວ ເຫດ*
*ສັນນັ້ນຈົ່ງແລ່ນເພື່ອຊີງລາງວັນໃຫ້ໄດ້. 25ຝ່າຍນັກກິລາທຸກຄົນກໍເຄັ່ງຄັດໃນຣະບຽບທຸກຢ່າງ ເຂົາເຮັດຢ່າງນັ້ນ ກໍເພື່ອຈະ*
*ໄດ້ພວງມາລັຍທີ່ຫ່ຽວແຫ້ງໄປ ແຕ່ເຮົາເຮັດເພື່ອຈະໄດ້ພວງມາລັຍອັນບໍ່ຫ່ຽວແຫ້ງໄປ. 26ດ້ວຍເຫດນັ້ນ ເຮົາຈຶ່ງແລ່ນເສັງ*
*ໂດຽມີເປົ້າໝາຍ ເຮົາບໍ່ໄດ້ຕໍ່ສູ້ຢ່າງນັກມວຍທີ່ຊົກລົມ. 27ແຕ່ເຮົາກໍທຸບຕີຮ່າງກາຍຂອງເຮົາໃຫ້ມັນແຂງຢູ່ຄານີ ເພາະຢ້ານ*
*ວ່າເມື່ອເຮົາໄດ້ປະກາດແກ່ຄົນອື່ນແລ້ວ ເຮົາເອງຈະຖືກຂ້າຊື່ອອກຈາກການແຂ່ງຂັນ.*

ທ່ານໂປໂລ ມຸ້ງໝັ້ນຢ່າງເຕັມປ່ຽມເພື່ອເຂົ້າເຖິງແຕ່ລະຄົນ ແລະໃຫ້ຂ່າວປະເສີດໄປເຖິງທຸກຄົນ. ເພິ່ນບໍ່ໄດ້ໃຊ້ຊີວິດ "ເໝືອນຄົນແລ່ນແຂ່ງໂດຍບໍ່ມີເປົ້າໝາຍ"ຫຼື "ເໝືອນດັ່ງຊົກລົມ." ເພິ່ນມີເປົ້າໝາຍສະເພາະ ແລະເຄັ່ງຄັດໃນຣະບຽບທຸກຢ່າງໃນວຽກງານຂອງເພິ່ນ.

ເພື່ອໃຫ້ບັນລຸເປົ້າໝາຍນັ້ນ, ແຕ່ວ່າ, ບໍ່ງ່າຍຈັກເທື່ອ. ທ່ານໂປໂລເຫັນວ່າເປັນໜ້າທີ່ສຳຄັນ ຊຶ່ງຕ້ອງການມີວິນັຍ ແລະການບັງຄັບຕົວເອງ. ເພິ່ນເນັ້ນໜັກ ໂດຍການສົມທຽບຊີວິດຄຣິສຕຽນ ແລະການຮັບໃຊ້ ໃສ່ນັກກິລາແລ່ນແຂ່ງ. ການປຽບທຽບແບບນີ້ ເຮັດໃຫ້ຄຣິສຕະຈັກໃນໂກຣິນໂທເຂົ້າໃຈງ່າຍ ເພາະການແຂ່ງແລ່ນ (Isthmian Games) ໄດ້ຖືກຈັດຂຶ້ນໃນເມືອງນີ້ ທຸກໆສອງປີ. ກິລານີ້ເປັນເກມເອກ, ທີສອງກໍແມ່ນ ກິລາ ໂອລິມປິກ. ບໍ່ເໝືອນເທສການແຂ່ງຂັນກິລາສມັຍໃໝ່ ມີແຕ່ໄດ້ຮັບລາງວັນຖ້າເຂົາໄດ້ທີ່ນຶ່ງ. ກິລາ ອິສມຽນ ບໍ່ໄດ້ມອບຫຼຽນຄຳ, ເງິນ, ຫຼືທອງສຳຣິດ ເປັນລາງວັນ ແລະແນ່ນອນບໍ່ມີລາງວັນ "ເຂົ້າຮ່ວມ"ມອບໃຫ້. ນັກກິລາມີແຕ່ຊນະ ຫຼືເມືອບ້ານມືເປົ່າເທົ່ານັ້ນ.

***ແມ່ນຫຍັງເປັນລາງວັນສຳລັບການດຳຣົງຊີວິດຄຣິສຕຽນແຕ່ລະວັນ ແລະ ທຸກໆວັນ ?***

ນອກຈາກຄວາມປາຖນາຢາກຊະນະແລ້ວ ນັກກິລາໃນໂກຣິນໂທຍັງຫວັງອາຫານບາງຢ່າງ, ຄວາມສັມພັນທາງເພດ, ແລະສິ່ງອື່ນໆເພື່ອໃຫ້ສຸມຈິດສຸມໃຈໃສ່ການແຂ່ງຂັນຂອງເຂົາ. ແນ່ນອນ, ມີເວລາສລອງ ແລະພັກຜ່ອນຕາມມາພາຍຫຼັງ, ແຕ່ເປົ້າໝາຍຂອງເຂົາຕ້ອງການ ການຖວາຍບູຊາ ໃນຂະນະທີ່ເຂົາຕຽມທີ່ຈະແລ່ນ.
ໃນໂລກປະຈຸບັນນີ້, ນັກກິລາທີ່ຖືວິນັຍຕົວເອງເພື່ອໃຫ້ເກ່ງກວ່າ ແລະເອົາຊະນະສາມາດໄດ້ຮັບລາງວັນຕ່າງໆ ຈາກເງິນ, ຮອດຫຼຽນຄຳ, ແລະຮອດເປັນກຽດດ້ວຍການຕິດ ສຕິກເກີ "26.2" ໃສ່ຣົດຂອງເຂົາ. ໃນສມັຍຂອງທ່ານໂປໂລ, ນັກກິລາໄດ້ຮັບ "ມົງກຸດຫ່ຽວແຫ້ງ," ຊຶ່ງບໍ່ມີຫຍັງເກີນກວ່າພວງໃບໄມ້ສຳລັບງານສລອງ.

ນັ້ນມັນກົງກັນຂ້າມກັບ "ລາງວັນ" ທີ່ລໍຖ້າຜູ້ເຊື່ອທັງຫຼາຍ ຜູ້ທີ່ມີວິນັຍໃນຊີວິດ ແລະການຮັບໃຊ້ຊຶ່ງພຣະເຈົ້າໄດ້ຊົງເອີ້ນເຂົາໃຫ້ເຮັດນັ້ນ. ທ່ານໂປໂລບໍ່ໄດ້ອະທິບາຍສິ່ງອື່ນໃດນອກເໜືອ "ພວງມາລັຍທີ່ຫ່ຽວແຫ້ງ." ຄວາມແຕກຕ່າງຈາກລາງວັນທີ່ທ່ານໂປໂລກ່າວເຖິງນັ້ນແມ່ນ "ລາງວັນຊຶ່ງພຣະເຈົ້າແຫ່ງເມືອງສວັນໄດ້ໃຫ້ສັນຍາໄວ້ຊຶ່ງພຣະເຈົ້າໄດ້ຊົງເອີ້ນເອົາໃນພຣະເຢຊູຄຣິດໃຫ້ໄປຮັບຢູ່ເບື້ອງເທິງ" (ຟລປ 3:14). ພວກເຮົາຍັງສາມາດໝັ້ນໃຈໄດ້ວ່າ ເປັນລາງວັນຕລອດໄປເປັນນິດ ແລະມີຄຸນຄ່າໃຫຍ່ຫຼວງ.

ດັ່ງທີ່ພວກເຮົາເຫັນແລ້ວວ່າ, ມີແຕ່ນັກກິລາຄົນດຽວເທົ່ານັ້ນໄດ້ຮັບລາງວັນໃນສມັຍຂອງທ່ານໂປໂລ. ແມ່ນແຕ່ໃນກິລາໂອລິມປິກ ສມັຍໃໝ່, ມີພຽງແຕ່ຜູ້ແຂ່ງຂັນສາມຄົນເທົ່ານັ້ນທີ່ນັບເປັນຜູ້ຊນະໃນແຕ່ລະປະເພດ. ແຕ່ວ່າທຸກຄົນທີ່ແລ່ນຕາມພຣະຄຣິດຈະຊະນະໝົດ ການຄາດຫວັງນັ້ນ, ດັ່ງທ່ານໂປໂລ ພວກເຮົາເຄັ່ງຄັດໃນຣະບຽບແລະມຸ້ງໝັ້ນເພື່ອ " ແລ່ນໃຫ້ມີທາງໄດ້ຮັບລາງວັນ. " ໜ້າສົນໃຈ, ເຖິງແມ່ນທ່ານໂປໂລເຮັດວຽກຢ່າງມີວິນັຍໃນຊີວິດແລະການຮັບໃຊ້ຂອງເພິ່ນນັ້ນ ເພາະ "ຢ້ານວ່າເພິ່ນເອງຈະຖືກຂ້າຊື່ອອກຈາກການແຂ່ງຂັນ." ນີ້ບໍ່ແມ່ນບັນຫາທີ່ຈະພາໃຫ້ເສັຽຄວາມພົ້ນ ແຕ່ແມ່ນການເສັຽລາງວັນຊຶ່ງມາຈາກການຮັບໃຊ້ພຣະອົງຜູ້ຊົງໄຖ່ເຮົາ.

ພວກເຮົາຄົງມີວັນພັກຜ່ອນນອນໃນເປ ຫາກເຮົາມີໃຈຮັກໃນການຮັບໃຊ້ພຣະຄຣິດ ແຕ່ການຮັບໃຊ້ພຣະຄຣິດ ແລະການເຂົ້າເຖິງຄົນດ້ວຍຂ່າວປະເສີດຕ້ອງມີວິນັຍ ແລະຄວາມພະຍາຍາມ ໃນເມື່ອເຮົາເພິ່ງພຣະວິນຍານທຳງານຜ່ານເຮົາ, ພວກເຮົາຕ້ອງອອກໄປບ່ອນທີ່ຄົນຢູ່ພຸ້ນ ແລະສ່ວນມາກ ໝາຍເຖິງການກ້າວອອກນອກເຂດສະດວກສະບາຍຂອງເຮົາ. ຕ້ອງມີວິນັຍ ແລະການຄວບຄຸມຕົວເອງ, ແຕ່ກໍຄຸ້ມຄ່າແມ່ນບໍ່.

ຈົ່ງປັກຕາເບິ່ງພຣະເຢຊູ ແລະຊອກຫາໂອກາດແບ່ງປັນຄວາມເຊື່ອຂອງທ່ານໃນພຣະອົງແກ່ຄົນອື່ນ. ຖານະຂອງທ່ານແມ່ນຢູ່ໃນພຣະຄຣິດ. ຈົ່ງນຳເອົາຖານະນັ້ນ, ກ້າວອອກໄປສູ່ຊີວິດຜູ້ອື່ນ, ແລະຊັກນຳເຂົາໃຫ້ຮູ້ຈັກຖານະຂອງເຂົາໃນພຣະຄຣິດ.

*ສິ່ງໃດທີ່ພວກເຮົາຄວນຍຶດຖືແລະເກັບໄວ້ໃຊ້ແລ່ນແຂ່ງຄວາມເຊື່ອໃຫ້ດີ ?*

## ນຳໃຊ້ໃນຊີວິດ

ທ່ານຈະໃສ່ເກີບຄົນອື່ນໄດ້ຢ່າງໃດໃນອາທິດນີ້ເພື່ອແບງປັນຂ່າວປະເສີດ? ຈົ່ງພິຈາຣະນາເບິ່ງຄຳແນະນຳຕໍ່ໄປນີ້:

- **ອະທິຖານ.** ຈົ່ງນຶກເຖິງຜູ້ໃດຜູ້ໜຶ່ງຊຶ່ງຮູ້ຈັກສ່ວນຕົວ ຜູ້ຊຶ່ງຕ້ອງການຕິດຕາມພຣະເຢຊູ. ອະທິຖານເພື່ອຄົນນີ້ແຕ່ລະວັນ. ທູນຂໍການຊົງນຳ ແລະໂອກາດເປັນພະຍານ.

- **ຮຽນຮູ້.** ເຮັດຮ່ວມກັບໝູ່ເພື່ອນເພື່ອສຶກສາກຸ່ມຄົນໃນຊຸມຊົນຂອງທ່ານ ຫຼືທົ່ວໂລກ. ຮຽນຮູ້ວ່າມີຫຍັງທ່ານສາມາດເຂົ້າໃຈກ່ຽວກັບຄວາມເຊື່ອແລະປະເພນີຂອງເຂົາ. ອະທິຖານຂໍໃຫ້ຂ່າວປະເສີດຊຶມຊວ່ານເຂົ້າສູ່ວັທນະທັມຂອງເຂົາ. ທູນຂໍໃຫ້ພຣະເຈົ້າຊ່ອຍວ່າທ່ານຈະເຂົ້າຮ່ວມໄດ້ຢ່າງໃດ.

- **ກ້າວອອກ.** ຖານະກຸ່ມ, ວາງແຜນໂຄງການຮັບໃຊ້ເປັນການສ່ວນຕົວ ຫຼືເປັນກຸ່ມ ສິ່ງໃດສິ່ງນຶ່ງທີ່ຕ້ອງການໃຫ້ທ່ານອອກຈາກເຂດສະດວກສະບາຍຂອງທ່ານ. ຊອກຫາທາງຕິດຕໍ່ກັບຄົນຜູ້ນັ້ນ ຫຼືຊຸມຊົນນັ້ນ ເພື່ອແບ່ງປັນພຣະຄຣິດ.

ການຍ່າງໄລຍະນຶ່ງໄມ ໃນເກີບຂອງຜູ້ອື່ນໆມັນຍາກກວ່າທີ່ເຮົາເຄີຍນຶກເອົາໄວ້. ແຕ່ມັນເປັນພາກສ່ວນນຶ່ງຂອງການແບ່ງປັນຂ່າວປະເສີດກັບຜູ້ຕ້ອງການໄດ້ຍິນ. ທ່ານພ້ອມແລ້ວບໍ່?

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**